ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

==========

ແຂວງຊຽງຂວາງ | ເລກທີ່..570../ຈຂ.ຊຂ
ສຳນັກງານປົກຄອງແຂວງ | ວັນທີ່..27../..6..../2016..

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດພັດທະນາທີ່ດິນອ່າງນ້ຳກັດ

- ອີງຕາມສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງທີ່ໄດ້ລະບຸໄວ້ໃນພາກທີ III ໝວດທີ IV ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ.
- ອີງຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງສະບັບເລກທີ 999/ຈຂ,ຊຂ, ລົງວັນທີ 21/12/2011 ວ່າດ້ວຍການ ວ່າດ້ວຍການລົງສຳຫຼວດເນື້ອທີ່ດິນຂອບເຂດຄັນຄູນ້ຳກັດເຖິງເສັ້ນທາງ ຜາຫານ ເມືອງແປກ.
- ອີງຕາມບົດບັນທຶກກອງປະຊຸມຜ່ານແຜນແບບຜັງອ່າງນ້ຳກັດ ຄັ້ງວັນທີ 18 ພຶດສະພາ 2016

**ເຈົ້າແຂວງ-ແຂວງຊຽງຂວາງຕົກລົງ :**

**ມາດຕາ 1 :** ເຫັນດີກຳນົດຂອບເຂດພັດທະນາທີ່ດິນບໍລິເວນອ່າງນ້ຳກັດ ທີ່ຢູ່ບ້ານ ໂພນສະຫ້ອນກາງ ແລະ ບ້ານ ໂພນສະຫວ່າງ ຕາມແຜນທີ່ການສຳຫຼວດວັດແທກຄັ້ງວັນທີ 01/02/2012 ເຊິ່ງມີຂອບເຂດທິດຕິດກັບດັ່ງນີ້ :

- ທິດເໜືອຕິດກັບ : ບັນດາຕອນດິນຂອງບຸກຄົນ ລວມໄລຍະ 832.60 ແມັດ
- ທິດໃຕ້ຕິດກັບ : ທາງຮ່ອມ,ບັນດາຕອນດິນຂອງບຸກຄົນ ລວມໄລຍະ 632.70 ແມັດ
- ທິດຕາເວັນອອກຕິດກັບ : ຖະໜົນ ຜາຫານ ລວມໄລຍະ 487.50 ແມັດ
- ທິດຕາເວັນຕົກຕິດກັບ : ຖະໜົນ ວິລະຊົນ ລວມໄລຍະ 219.30 ແມັດ

**ລວມເນື້ອທີ່ທັງໝົດ 27,49 ເຮັກຕາ**

**ມາດຕາ 2 :** ມອບໃຫ້ຄະນະກຳມະການຮັບຜິດຊອບວາງແຜນພັດທະນາອ່າງນ້ຳກັດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຊົດເຊີຍການນຳໃຊ້ທີ່ດິນໃນຂອບເຂດດັ່ງກ່າວ ເພື່ອຂຶ້ນທະບຽນທີ່ດິນລັດ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 3 :** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງ/ກຳມະ ເຈົ້າແຂວງ-ແຂວງຊຽງຂວາງ

ບ່ອນສົ່ງ:

1. ບັນດາທ່ານຮອງເຈົ້າແຂວງທ່ານລະ 1 ສະບັບ
2. ຄະນະແກ້ໄຂອ່າງນ້ຳກັດ 1 ສະບັບ
3. ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ 1 ສະບັບ
4. ພະແນກໂຍທາທິການແລະຂົນສົ່ງ 1 ສະບັບ
5. ເຈົ້າເມືອງແປກ 1 ສະບັບ
6. ອົງການພັດທະນາແລະບໍລິການຕົວເມືອງແປກ 1 ສະບັບ
7. ນາຍບ້ານບ້ານໂພນສະຫວ່າງ,ໂພນສະຫ້ອນກາງ ບ້ານລະ 1 ສະບັບ

ບົວສອນ ສົມວົງທອງ